ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0620 /ຜ-ຟຟລ.

ນະຄອນຫລວງວຽງຈັນ, ວັນທີ 31 MAR 2020

# ແຈ້ງການ

ຮຽນ: ບັນດາທ່ານຜູ້ຖືຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ການປະຕິບັດວຽກງານ ຂອງພະນັກງານ-ກຳມະກອນ ຂອງ ຜ-ຟຟລ ໃນໄລຍະທີ່ມີການລະບາດ ຂອງ ພະຍາດໂຄວິດ 19 (COVID-19).

- ອີງຕາມ ຄຳສັ່ງ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ເລກທີ 06/ນຍ, ລົງວັນທີ 29 ມີນາ 2020..

ເນື່ອງຈາກວ່າໄດ້ມີ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 ສະບັບເລກທີ 06/ນຍ, ລົງວັນທີ 29/03/2020, ທີ່ມີເນື້ອໃນເວົ້າເຖິງການມອບໃຫ້ທຸກພາກສ່ວນໃນ ສປປ ລາວ ເພີ່ມທະວີມາດຕະການສະກັດກັ້ນພະຍາດດັ່ງກ່າວ. ມາເຖິງປັດຈຸບັນຢູ່ ສປປ ລາວ ກໍໄດ້ກວດພົບຜູ້ຕິດເຊື້ອພະຍາດດັ່ງກ່າວ ແລະ ມີຄວາມສ່ຽງທີ່ຈະມີການແຜ່ລະບາດໃນທົ່ວປະເທດ.

ສະນັ້ນ, ເພື່ອເປັນການປະຕິບັດມະຕິຄຳສັ່ງຂອງທ່ານນາຍົກລັດຖະມົນຕີຢ່າງເຄັ່ງຄັດ ແລະເພື່ອປ້ອງກັນການແຜ່ລະບາດຂອງພະຍາດດັ່ງກ່າວ ແລະຮັບປະກັນຄວາມປອດໄພຂອງພະນັກງານ-ກຳມະກອນ ທົ່ວ ຜ-ຟຟລ, ພ້ອມທັງສະແດງຄວາມຮັບຜິດຊອບຕໍ່ສັງຄົມໂດຍລວມ. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຂໍຖືເປັນກຽດລາຍງານມາຍັງທ່ານຊາບຄື:

1. ໃນລະຫວ່າງ ວັນທີ 01-11 ເມສາ 2020 ພະນັກງານ-ກຳມະກອນທຸກພາກສ່ວນ ຂອງ ຜ-ຟຟລ ຈະເຮັດວຽກທາງລັດຖະການຢູ່ເຮືອນ ຫຼື ທີ່ພັກອາໄສ ໂດຍຜ່ານລະບົບການສື່ສານ, ອີເລັກໂຕຣນິກ ແລະ ເຄືອຄ່າຍອິນເຕີເນັດ ເຊັ່ນ: ໂທລະສັບ, ອີເມວ, ສື່ສັງຄົມອອນລາຍ ແລະ ອື່ນໆ. ແລະ ສືບຕໍ່ພັນບຸນປີໃໝ່ລາວ ຮອດວັນທີ 19 ເມສາ 2020.
2. ກໍລະນີມີວຽກດ່ວນ ຫຼືມີຄວາມຈຳເປັນທີ່ຈະຕ້ອງໄດ້ເຂົ້າຫ້ອງການ ຕ້ອງໄດ້ຮັບການອະນຸມັດຈາກຄະນະອຳນວຍການໃຫຍ່ເທົ່ານັ້ນ.
3. ພະນັກງານຍາມໄຟ (Operator) ຂອງເຂື່ອນ ແລະ ສູນບັນຊາໄຟຟ້າ ສຳນັກງານໃຫຍ່ ແມ່ນມາປະຈຳການປົກກະຕິ.
4. ພະນັກງານບຳລຸງຮັກສາ (Maintenance) ໄດ້ປະຈຳຢູ່ເຮືອນພັກພາຍໃນເຂື່ອນ ເພື່ອກຽມຄວາມພ້ອມໃນກໍລະນີທີ່ມີເຫດສຸກເສີນ.

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ, ຕູ້ ປ.ນ 2392, ນະຄອນຫລວງວຽງຈັນ.
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la

5. ຜ-ຟຟລ ໄດ້ແຕ່ງຕັ້ງຄະນະກຳມະການສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ໂຕ້ຕອບການແຜ່ລະບາດ ຂອງເຊື້ອຈຸລະໂລກສາຍພັນໃໝ່ Covid-19, ສະບັບເລກທີ 0557/ ຜ-ຟຟລ, ລົງວັນທີ 26 ມີນາ 2020 ປະຈຳການຕາມການມອບໝາຍ, ຖ້າມີກໍລະນີດ່ວນແມ່ນຈະໄດ້ຮຽກເອີ້ນຕາມຄວາມຈຳເປັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-Generation Public Company

ລັດຕະນາ ປະທຸມວັນ

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ, ຕູ້ ປ.ນ 2392, ນະຄອນຫລວງວຽງຈັນ.
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la